# ແຂ່ງຂັນກິລາກ໋ອຟ ຊີງຂັນທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ
# ເນື່ອງໃນໂອກາດສົ່ງທ້າຍປີເກົ່າຕ້ອນຮັບປີໃໝ່ ຄ.ສ 2012



ໃນຕອນເຊົ້າຂອງວັນທີ 31 ທັນວາ ທີ່ສະໜາມກິລາກ໋ອຟຫຼັກ 6 ນະຄອນຫຼວງວຽງຈັນ ໄດ້ຈັດຕັ້ງການແຂ່ງຂັນກ໋ອຟ ຊີງຂັນທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ ເນື່ອງໃນໂອກາດສົ່ງທ້າຍປີເກົ່າ-ຕ້ອນຮັບປີໃໝ່ ຄ.ສ 2012 ໂດຍການໃຫ້ກຽດຕິເປີດເດີ່ນຂອງທ່ານ ສົມພາວ ໄຟສິດ ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ພ້ອມນີ້ກໍມີທ່ານ ພູເພັດ ຄໍາພູນວົງລັດຖະມົນຕີວ່າການກະຊວງການເງິນ, ປະທານທີ່ປຶກສາສະໂມສອນກ໋ອຟທະນາຄານ, ນອກນີ້ກໍມີບັນດານັກກິລາກ໋ອຟ ທີ່ປະຈໍາຢູ່ສະໂມສອນກ໋ອຟທະນາຄານເຂົ້າຮ່ວມ.

ທ່ານ ພານທອງ ກອງວົງສາ ຮອງປະທານສະໂມສອນກິລາກ໋ອຟ ທະນາຄານ ໄດ້ສະຫຼຸບຜົນຂອງການແຂ່ງຂັນກິລາກ໋ອຟ ໂດຍທ່ານໄດ້ແຈ້ງໃຫ້ຮູ້ວ່າ:

- ລາງວັນຕີໃກ້ທຸງຂຸມພາສາມ: ຂຸມ 4 ໄດ້ແກ່ທ່ານ ວຽງຄໍາ ວັນສີລາລົມ,ຂຸມ 6 ໄດ້ແກ່ທ່ານ ເດດພູວັງ ມູລຣັຕນ໌, ຂຸມ 8 ໄດ້ແກ່ທ່ານ ຄອນສະຫວັນ ສີງສະຫວັນ, ຕີໄກໃກ້ເສັ້ນຜ່າກາງ ຂຸມ 7 ໄດ້ແກ່ Mr Damain Bell, ຕີໄກສຸດ ຂຸມ 7 ໄດ້ແກ່ທ່ານ ສະຫຼີມໄຊ ທຽງທໍາ.

- ສາຍ VIP: ຊະນະເລີດ ທ່ານ ພູເພັດ ຄຳພູນວົງ, ຮອງຊະນະເລີດ ທ່ານ ເດດພູວັງ ມູລຣັຕນ໌
- ສາຍ ກ: ຊະນະເລີດ ທ່ານ ພູວົງ ກໍລະສັກ, ຮອງຊະນະເລີດ ທ່ານ ສັງບິທະ ໜໍ່ແກ້ວ
- ສາຍ ຂ: ຊະນະເລີດ ທ່ານ ໄຊນ້ອຍ, ຮອງຊະນະເລີດ ທ່ານ ດຣ ຄຳຂັນ ນາພາວົງ
- ສາຍ ຄ: ຊະນະເລີດທ່ານ ຈັນສະຫວັດ ຊຸນວິເສດ, ຮອງຊະນະເລີດ ທ່ານ ພານທອງ ກອງວົງສາ
- ສາຍ ງ: ຊະນະເລີດ ທ່ານ ວຽງຄຳ ວັນສີລາລົມ,ຮອງຊະນະເລີດ ທ່ານ ອັກສອນ ບຸພະກອນຄຳ